ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ການເຜີຍແຜ່ການກຳນົດໝວດກິດຈະກຳຂອງອາຊຽນສຳລັບການເງິນແບບຍືນຍົງ ສະບັບທີ 2




ໃນໄລຍະຜ່ານມາ ເສດຖະກິດຂອງບັນດາປະເທດໃນອາຊຽນ ແມ່ນມີການພັດທະນາ ແລະ ຂະຫຍາຍຕົວແບບກ້າວກະໂດດ ຊຶ່ງບັນດາປະເທດສະມາຊິກອາຊຽນ (ASEAN Member States: AMS) ໄດ້ສຸມໃສ່ພັດທະນາດ້ານອຸດສາຫະກຳເປັນຫຼັກ ອັນເປັນສາເຫດສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ. ຈາກຜົນການສຳຫຼວດປີ 2020 ແມ່ນ 6 ໃນ 10 ປະເທດ AMS ຕິດອັນດັບ 50 ປະເທດ ທີ່ມີມົນລະພິດທາງອາກາດຫຼາຍທີ່ສຸດໃນໂລກ ແລະ ຄາດຄະເນການໃຊ້ພະລັງງານຈະເພີ່ມຂຶ້ນເຖິງ 34% ໃນຂະນະທີ່ຈຳນວນປະຊາກອນຈະເພີ່ມຂຶ້ນ 16% ແລະ GDP ເພີ່ມຂຶ້ນ 180% ໃນໄລຍະປີ 2019-2050. ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຂອງອົງການສະຫະປະຊາຊາດ (United Nations) ແລະ ສົນທິສັນຍາປາຣີ (Paris Agreement), AMS ຈຶ່ງໄດ້ຮັບຮອງເອົາ ແຜນຈັດຕັ້ງປະຕິບັດການພັດທະນາແບບຍືນຍົງໃນອາຊີ ແລະ ປາຊີຟິກ ວາລະປີ 2030 ເພື່ອຊຸກຍູ້ໃຫ້ແຕ່ລະປະເທດ ເຫັນໄດ້ເຖິງຄວາມສຳຄັນ ແລະ ຈຳເປັນຕໍ່ການຫຼຸດຜ່ອນການທຳລາຍສິ່ງແວດລ້ອມ ທີ່ຈະມີຜົນກະທົບຕໍ່ເສດຖະກິດ-ສັງຄົມໃນອະນາຄົດ.

ດ້ວຍເຫດນີ້, AMS ຈຶ່ງມີເປົ້າໝາຍທີ່ຈະບັນລຸການຫັນປ່ຽນໄປສູ່ການນຳໃຊ້ພະລັງງານໄຟຟ້າ, ພະລັງງານໝູນວຽນ ແລະ ພະລັງງານສະອາດໃຫ້ຫຼາຍຂຶ້ນ ລວມທັງ ຫຼຸດຜ່ອນການປ່ອຍອາຍກາສເຮືອນແກ້ວ ແລະ ການທຳລາຍສິ່ງແວດລ້ອມ. ເພື່ອຈັດຕັ້ງປະຕິບັດດັ່ງກ່າວ, ຫົວໜ່ວຍທຸລະກິດ ແມ່ນມີບົດບາດສຳຄັນຕໍ່ການຜັກດັນວຽກງານຍືນຍົງໃຫ້ເປັນຮູບປະທຳ ໂດຍຜ່ານການສະໜອງທຶນຈາກຕະຫຼາດການເງິນ ເພື່ອສົ່ງເສີມໃຫ້ມີການລົງທຶນ ແລະ ຂັບເຄື່ອນນະໂຍບາຍສີຂຽວ. ສະນັ້ນ, ກອງປະຊຸມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານ (ASEAN Finance Ministers and Central Bank Governors’ Meeting: AFMGM) ໃນປີ 2019 ຈຶ່ງໄດ້ຮັບຮອງເອົາວຽກງານສີຂຽວ ແລະ ການເງິນຍືນຍົງ ໃຫ້ເປັນວາລະສຳຄັນ ແລະ ຈະມີການປຶກສາຫາລືຕໍ່ວຽກງານດັ່ງກ່າວໃນ ກອງປະຊຸມຮອງລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານ (ASEAN Finance and Central Bank Deputies Meeting: AFCDM) ແລະ AFMGM ນັບແຕ່ປີ 2021 ເປັນຕົ້ນໄປ. ໃນເດືອນພະຈິກ 2021, ອົງການຂະແໜງການການເງນຂອງອາຊຽນ (ASEAN FINANCE SECTORAL BODIES) ໄດ້ເຜີຍແຜ່ການຄົ້ນຄວ້າໝວດກິດຈະກຳສີຂຽວອາຊຽນສຳລັບການເງິນແບບຍືນຍົງ ສະບັບທີ 1.

ສະພາບໍລິຫານຄົ້ນຄວ້າໝວດກິດຈະກຳຂອງອາຊຽນ (ASEAN Taxonomy Board : ATB) ຕາງໜ້າໃຫ້ບັນດາອົງການຂະແໜງການການເງິນຂອງອາຊຽນ ປະຈຸບັນ ໄດ້ດຳເນີນບາດກ້າວຕໍ່ໄປ ເພື່ອບັນລຸສົນທິສັນຍາປາຣີ ໂດຍໄດ້ປະກາດເຜີຍແຜ່ການຄົ້ນຄວ້າໝວດກິດຈະກຳສີຂຽວອາຊຽນສຳລັບການເງິນແບບຍືນຍົງ ສະບັບທີ 2. ໂດຍສະບັບທີ

1 ໄດ້ເຜີຍແຜ່ໃນເດືອນພະຈິກ 2021 ໄດ້ວາງກອບລວມ ກ່ຽວກັບການຈັດກຸ່ມກິດຈະກຳຂອງອາຊຽນ. ສຳລັບສະບັບທີ 2 ປະກອບດ້ວຍ (1) ກອບພື້ນຖານທີ່ຄົບຖ້ວນສົມບູນ (Complete Foundation Framework : CFF) ທີ່ປະກອບມີວິທີການລະອຽດ ສຳລັບການປະເມີນກິດຈະກຳທາງເສດຖະກິດ ແລະ (2) ເງື່ອນໄຂການຄັດເລືອກທາງວິຊາການ (Technical Screening Criteria :TSC) ສຳລັບຂະແໜງການຈຸດສຸມທຳອິດ ເຊັ່ນ: ຂະແໜງໄຟຟ້າ, ອາຍແກັສ, ອາຍນ້ຳ ແລະ ເຄື່ອງປັບອາກາດ (ຂະແໜງພະລັງງານ) ພາຍໃຕ້ມາດຕະຖານເພີ່ມເຕີມ (Plus standard). TSCs ສຳລັບຂະແໜງການຈຸດສຸມອື່ນໆ ຈະຖືກເຜີຍແຜ່ໃນສະບັບຕໍ່ໄປຂອງ ການຈັດໝວດກິດຈະກຳຂອງອາຊຽນ. ສະບັບທີ 2 ສ້າງຂຶ້ນບົນພື້ນຖານແນວຄິດຂອງການກຳນົດກອບທີ່ມີຫຼາຍຂັ້ນ (multi-tiered framework) ທີ່ລະບຸໄວ້ໃນສະບັບທີ 1. Multi-tiered framework ມີຈຸດປະສົງເພື່ອອຳນວຍຄວາມສະດວກໃຫ້ແກ່ໄລຍະຂ້າມຜ່ານຂອງບັນດາປະເທດສະມາຊິກອາຊຽນ ໂດຍຄຳນຶງເຖິງຄວາມຫຼາກຫຼາຍໃນການພັດທະນາເສດຖະກິດ, ຂະແໜງການເງິນ ແລະ ພື້ນຖານໂຄງລ່າງທີ່ຄົບກຳນົດ.

ໂດຍຜ່ານກອບພື້ນຖານ (Foundation Framework) ທີ່ຮັບຮອງເອົາວິທີການປະເມີນອີງຕາມຫຼັກການ, ປັດຈຸບັນ ຜູ້ນຳໃຊ້ສາມາດປະເມີນຄຸນນະພາບຂອງກິດຈະກຳທາງເສດຖະກິດໂດຍໃຊ້ຄຳຖາມແນະນຳ, ແຜນວາດການຕັດສິນໃຈ ແລະ ກໍລະນີການນຳໃຊ້ສຳລັບທັງ 4 ຈຸດປະສົງດ້ານສິ່ງແວດລ້ອມ (Environmental objectives:EOs) ແລະ 3 ເງື່ອນໄຂທີ່ສຳຄັນ (Essential criteria: EC). ຈຸດປະສົງດ້ານສິ່ງແວດລ້ອມ ແລະ ເງື່ອນໄຂທີ່ສຳຄັນ ລວມທັງຄຳຖາມແນະນຳທີ່ປະກອບເປັນກອບພື້ນຖານ ໄດ້ຖືກອອກແບບເພື່ອໃຫ້ສາມາດນຳໃຊ້ໄດ້ກັບ AMS ທັງໝົດ ລວມທັງຜູ້ມີສ່ວນກ່ຽວຂ້ອງໃນຂະແໜງການເງິນ ແລະ ວິສາຫະກິດ. ການນຳໃຊ້ຄຳຖາມແນະນຳກິດຈະກຳຖືກຈັດປະເພດເປັນສີຂຽວ, ສີອຳພັນ ຫຼື ສີແດງ.

Plus standard ຮັບຮອງເອົາການປະເມີນ ແລະ ວິທີການທີ່ກ້າວໜ້າກວ່າ ໂດຍອີງໃສ່ເງື່ອນໄຂການຄັດເລືອກທາງວິຊາການ ສະເພາະ ແລະ ຫຼັກການທາງວິທະຍາສາດໃນການຈັດປະເພດກິດຈະກຳ. ເພື່ອຊຸກຍູ້ ແລະ ຮັບຮູ້ຄວາມພະຍາຍາມໃນການຂ້າມຜ່ານຂອງທຸລະກິດ, Plus standard ປະກອບມີການຈັດປະເພດ ສີອຳພັນ ຊັ້ນ 2 ແລະ ສີອຳພັນຊັ້ນ 3 ຊຶ່ງຈະໄດ້ຮັບການບຳນານຕາມເວລາທີ່ກຳນົດ. ນີ້ແມ່ນສ່ວນເພີ່ມເຕີມຈາກລະດັບສີຂຽວທີ່ສອດຄ້ອງກັນກັບການຈັດໝວດກິດຈະກຳຂອງສາກົນອື່ນໆທີ່ກ່ຽວຂ້ອງ ແລະ ອີງໃສ່ເປົ້າໝາຍເກນ 1,5 ອົງສາ ຕາມສົນທິສັນຍາປາຣີ.

ສະບັບທີ 2 ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງດ້ານສັງຄົມໃນການຈັດໝວດກິດຈະກຳ, ໂດຍການລວມເອົາເຂົ້າເປັນເງື່ອນໄຂ EC ທີ 3 ຂອງການຈັດໝວດກິດຈະກຳຂອງອາຊຽນ, ຄຽງຄູ່ກັນກັບເງື່ອນໄຂ "ການບໍ່ເຮັດອັດຕະລາຍຕໍ່ສິ່ງແວດລ້ອມ" (Do No Significant Harm: DNSH) ແລະ "ມາດຕະການແກ້ໄຂເພື່ອການຂ້າມຜ່ານ" (Remedial Measures to Transition: RMT). ສົມທົບກັບລັກສະນະອື່ນໆ ເຊັ່ນ: ການຂະຫຍາຍເກນ "ບໍ່ເຮັດອັນຕະລາຍຕໍ່ສິ່ງແວດລ້ອມ", ໄດ້ມີການກຳນົດຫຼັກການລວມ ເພື່ອຊ່ວຍໃຫ້ເກີດມີການຂ້າມຜ່ານຢ່າງເປັນລະບຽບ ແລະ ຍຸຕິທຳ ແລະ ຊຸກຍູ້ການຮັບຮອງເອົາການເງິນແບບຍືນຍົງຂອງບັນດາປະເທດອາຊຽນ.

ໃນການພິຈາລະນາສະພາບການສະເພາະຂອງອາຊຽນ ແນວທາງສະບັບນີ້ໄດ້ຮັບຮູ້ຄວາມພະຍາຍາມທີ່ຈະຢຸດເຊົາໃຊ້ໂຮງງານໄຟຟ້າຖ່ານຫີນກ່ອນກຳນົດ ເປັນຄັ້ງທຳອິດຂອງໂລກ ສຳລັບການການຈັດໝວດກິດຈະກຳໃນລະດັບພາກພື້ນ. ATB ໄດ້ພິຈາລະນາຢ່າງລະອຽດ ກ່ຽວກັບການຢຸດເຊົາໃຊ້ຖ່ານຫີນ (Coal phase-outs: CPOs) ທີ່ສາມາດມີ

ບົດບາດໃນການຫຼຸດຜ່ອນການປ່ອຍອາຍກາກບອນ ໃນການສະໜັບສະໜູນເປົ້າໝາຍຂອງສັນຍາປາຣີ ແລະ ເມື່ອເຂົ້າຫາຢ່າງຖືກຕ້ອງ ສະໜອງເຄື່ອງມືທີ່ມີປະສິດທິພາບສຳລັບການຂ້າມຜ່ານ.

ການເຜີຍແຜ່ການຈັດກຸ່ມກິດຈະກຳ ສຳລັບການເງິນແບບຍືນຍົງ ສະບັບທີ 2, ATB ສະແດງໃຫ້ເຫັນຄວາມມຸ່ງໝັ້ນ ໃຫ້ພາກສ່ວນກ່ຽວຂ້ອງມີກອບທົ່ວໄປທີ່ອີງໃສ່ຢ່າງວິທະຍາສາດ, ໃນຂະນະດຽວກັນ ກໍໄດ້ລວມເອົາ ແລະ ຮັບຮອງເອົາຂັ້ນຕອນການພັດທະນາຕ່າງໆຂອງປະເທດສະມາຊິກອາຊຽນ. ຫຼັງຈາກການເຜີຍແຜ່ສະບັບທີ 2, ATB ຈະປຶກສາຫາລືເປົ້າໝາຍຜູ້ທີ່ມີສ່ວນກ່ຽວຂ້ອງທີ່ສຳຄັນ ກ່ຽວກັບວິທີການປະເມີນຜົນເຊັ່ນດຽວກັນກັບ metrics ແລະ TSC ສຳລັບຂະແໜງພະລັງງານພາຍໃຕ້ Plus standard. ອີງຕາມການປຶກສາຫາລືເຫຼົ່ານີ້, ATB ມີຄວາມຕັ້ງໃຈທີ່ຈະໃຫ້ສຳເລັດ TSC ສຳລັບຂະແໜງການພະລັງງານໃນຕົ້ນປີ 2024. TSCs ສຳລັບ 5 ຂະແໜງຈຸດສຸມທີ່ຍັງເຫຼືອທີ່ກວມເອົາພາຍໃຕ້ Plus standard ຈະຖືກເຜີຍແຜ່ອອກມາເປັນໄລຍະ, ໂດຍ TSC ສຳລັບທັງ 6 ຂະແໜງຈຸດສຸມສຸດທ້າຍ, ໃນປີ 2025.

ATB ຫວັງວ່າຈະມີການຮ່ວມມືກັບບັນດາຜູ້ມີສ່ວນກ່ຽວຂ້ອງຕື່ມອີກໃນເອກະສານສະບັບທີ 2 ແລະ ຈະສືບຕໍ່ດຳເນີນບັນດາບາດກ້າວພັດທະນາ, ຮັກສາ ແລະ ຊຸກຍູ້ການສ້າງການຈັດໝວດກິດຈະກຳ ສຳລັບການເງິນແບບຍືນຍົງຂອງອາຊຽນ ທີ່ມີຄວາມໝາຍ ແລະ ມີປະສິດທິພາບ ເພື່ອແນໃສ່ກຳນົດທິດທາງເງິນທຶນໄປສູ່ອາຊຽນແບບຍືນຍົງ.

➢ **ການຈັດໝວດກິດຈະກຳ ສຳລັບການເງິນແບບຍືນຍົງ ສະບັບທີ 2 ສາມາດຄົ້ນຫາໃນເວັບໄຊດັ່ງລຸ່ມນີ້:**

- Association of Southeast Asian Nations–https://asean.org/wp-content/uploads/2023/03/ASEAN-Taxonomy-version-2.pdf.
- ASEAN Finance Cooperation Web Portal-https://afcwp.asean.org/wp-content/uploads/2023/03/ASEAN-Taxonomy-Version-2.pdf .
- ASEAN Capital Markets Forum–https://www.theacmf.org/ (in the Sustainable Finance section).
- Sustainable Finance Institute Asia–https://www.sfinstitute.asia/asean-taxonomy-forsustainable-finance_version-2/

ຂ່າວ ແລະ ພາບ ໂດຍ: ກົມຄຸ້ມຄອງທະນາຄານທຸລະກິດ

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*